

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I.** ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ....................................01 - 07

**II.** ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ................................................08 - 11

**III.** ການເຄື່ອນໄຫວຂອງ ອົງການຈັດຕັ້ງມະຫາຊົນ ພາຍໃນ ຄຕພ..................................................12


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ເດືອນກໍລະກົດ 2026


ສໍານັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

**Tel: 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 07 ກໍລະກົດ 2026, ຄະນະກຳມະການກວດກາສູນກາງພັກ ໄດ້ຈັດກອງປະຊຸມ ຄັ້ງທີ 8 ໂດຍການເປັນປະທານຂອງ ສະຫາຍ ເຈິ່ນ ສີແທ່ງ, ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ປະທານຄະນະກຳມະການກວດກາສູນກາງພັກ, ກອງປະຊຸມ ໄດ້ພິຈາລະນາ ແລະ ສະຫຼຸບບັນຫາຕ່າງໆ ໃນບົດລາຍງານທີ່ສະເໜີມາດຕະການການລົງວິໄນຕໍ່ສະມາຊິກພັກ ທີ່ລະເມີດລະບຽບການຂອງພັກໃນຄະນະພັກແຂວງກວາງນິງ, ລາວກາຍ, ກ່າເມົາ, ດົ່ງທາບ ແລະ ຄະນະພັກບໍລິສັດສະໜາມບິນຫວຽດນາມ ດັ່ງນີ້: (1) ສະເໜີໃຫ້ເຈົ້າໜ້າທີ່ ທີ່ມີສິດອຳນາດພິຈາລະນາ ແລະ ປະຕິບັດມາດຕະການທາງວິໄນຕໍ່ສະຫາຍ ຫງວຽນ ເຟືອງ ຖາວ, ອະດີດກຳມະການຄະນະພັກແຂວງ, ເລຂາສະຫະພັນຊາວໜຸ່ມແຂວງກວາງນິງ; ສະຫາຍ ຫງວຽນ ເດິ ມິງ, ອະດີດກຳມະການຄະນະພັກແຂວງ, ເລຂາຄະນະພັກຕາແສງບິ່ງລຽວ, ແຂວງກວາງນິງ; ສະຫາຍ ໂດ ເຈື່ອງ ຢາງ, ອະດີດກຳມະການຄະນະພັກແຂວງ, ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງລາວກາຍ; ສະຫາຍ ເຢືອງ ແທ່ງ ຈຸງ, ອະດີດຮອງເລຂາຄະນະພັກແຂວງ, ເລຂາຄະນະພັກຄະນະກຳມະການປະຊາຊົນແຂວງ, ປະທານຄະນະກຳມະການປະຊາຊົນແຂວງບາກລຽວ (ປະຈຸບັນແມ່ນແຂວງກ່າເມົາ); (2) ກ່າວຕັກເຕືອນ ສະຫາຍ ຟ້າມ ທຽນ ເຫງ້ຍ, ອະດີດຮອງເລຂາຄະນະພັກແຂວງ, ປະທານຄະນະກຳມະການປະຊາຊົນແຂວງດົ່ງທາບ (ໄລຍະປີ 2021-2026); (3) ຕຳນິຕິຕຽນ ສະຫາຍ ຫງວຽນ ວັນ ເຢືອງ, ອະດີດຮອງເລຂາຄະນະພັກແຂວງ, ປະທານຄະນະກຳມະການປະຊາຊົນແຂວງດົ່ງທາບ (ໄລຍະປີ 2016-2021); 4) ລົງວິໄນ ແລະ ປົດອອກຈາກການເປັນສະມາຊິກພັກ ຕໍ່ກັບ ສະຫາຍ ໂດ ເຕິດ ບິ່ງ, ອະດີດຄະນະປະຈຳຂອງຄະນະພັກ, ຮອງຜູ້ອຳນວຍການໃຫຍ່ບໍລິສັດສະໜາມບິນຫວຽດນາມ.

ວັນທີ 20-24 ກໍລະກົດ 2026, ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 03 ສະໄໝທີ XIV ໄດ້ຈັດຂຶ້ນໂດຍການເປັນປະທານຂອງ ສະຫາຍ ໂຕ ເລິມ, ເລຂາທິການໃຫຍ່, ປະທານປະເທດ. ກອງປະຊຸມ ໄດ້ພິຈາລະນາ ແລະ ຕົກລົງບັນຫາສຳຄັນໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XIV ຂອງພັກ; ວຽກງານກໍ່ສ້າງພັກ, ລະບົບການເມືອງ ແລະ ການພັດທະນາປະເທດຊາດໃນໄລຍະໃໝ່. ສະຫາຍ ໂຕ ເລິມ ໄດ້ເນັ້ນໜັກວ່າ ກອງປະຊຸມໃຫຍ່ ຄັ້ງທີ XIV ຂອງພັກ ໄດ້ກຳນົດແນວທາງ, ຈຸດປະສົງ ແລະ ທິດທາງຍຸດທະສາດໃຫຍ່ໆ; ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 02 ໄດ້ວາງພື້ນຖານການຈັດຕັ້ງ ແລະ ກົນໄກການຈັດຕັ້ງບໍລິຫານຂອງ ຄະນະບໍລິຫານງານສູນກາງພັກ ສະໄໝທີ XIV ແລະ ຫັນບັນດາທິດທາງຂ້າງເທິງໃຫ້ກາຍເປັນນະໂຍບາຍ ເພື່ອແກ້ໄຂຂໍ້ຄົງຄ້າງ, ບຸກທະລຸແຫຼ່ງກຳລັງແຮງ ແລະ ສ້າງກຳລັງແຮງພັດທະນາໃໝ່. ກອງປະຊຸມ ໄດ້ປຶກສາຫາລື 13 ເນື້ອໃນ ເພື່ອສ້າງຄວາມອາດສາມາດໃນການນຳພາ-ຊີ້ນຳ ແລະ ປົກປັກຮັກສາປະເທດຊາດໃນໄລຍະໃໝ່. ດັ່ງນັ້ນ, ບັນດາແນວທາງນະໂຍບາຍທີ່ສູນກາງພັກໄດ້ຮັບຮອງເອົາ ຕ້ອງສ້າງບາດກ້າວຫັນປ່ຽນຍຸດທະສາດ 04 ບາດກ້າວ ຄື: (1) ຍົກສູງຄວາມສາມາດໃນການນຳພາ-ຊີ້ນຳ ແລະ ຄຸນນະພາບຂອງການບໍລິຫານຂອງພັກ, ກົງຈັກການຈັດຕັ້ງຂອງລັດ; (2) ຄຸ້ມຄອງສະພາບແວດລ້ອມຂອງການພັດທະນາ, ເສີມຂະຫຍາຍປະສິດທິພາບກຳລັງແຮງຂອງຊາດ; (3) ກຳນົດ ແລະ ສ້າງຮູບແບບການພັດທະນາ ໂດຍອີງໃສ່ໝາກຜົນ, ສະຕິປັນຍາ, ເຕັກໂນໂລຊີ ແລະ ຊັບພະຍາກອນມະນຸດ; (4) ຮຽກຮ້ອງໃຫ້ມີການຫັນປ່ຽນຈາກການຮັບມືກັບຄວາມສ່ຽງແຕ່ລະຢ່າງ ໄປສູ່ການເສີມສ້າງຄວາມເຂັ້ມແຂງຂອງຊາດ, ຍົກສູງຄວາມສາມາດໃນການປັບຕົວ ແລະ ປົກປັກຮັກສາປະເທດຊາດຢ່າງໝັ້ນທ່ຽງ. ນອກນັ້ນ, ສະຫາຍ ໂຕ ເລິມ ໄດ້ເນັ້ນໜັກວ່າ ທຸກການຕັດສິນໃຈ ຕ້ອງໄດ້ຄຳນຶງເຖິງຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ, ພ້ອມທັງການພັດທະນາໄລຍະຍາວຂອງປະເທດເປັນສິ່ງສຳຄັນ.

### 2) ພັກກອມມູນິດຈີນ

ວັນທີ 01 ກໍລະກົດ 2026, ພິທີໂຮມຊຸມນຸມສະເຫຼີມສະຫຼອງວັນສ້າງຕັ້ງພັກກອມມູນິດຈີນຄົບຮອບ 105 ປີ ໄດ້ຈັດຂຶ້ນຢູ່ຫໍສະພາປະຊາຊົນແຫ່ງຊາດ, ທີ່ນະຄອນຫຼວງປັກກິ່ງ. ສະຫາຍ ສີ ຈິ້ນຜິງ ໄດ້ສະແດງຄວາມຢື້ຢາມຖາມຂ່າວ, ອວຍພອນເຖິງສະມາຊິກພັກ ທຸກຖ້ວນໜ້າ ແລະ ໄດ້ກ່າວຄຳປາໄສສຳຄັນໃນພິທີດັ່ງກ່າວວ່າ: ຕະຫຼອດໄລຍະ 105 ປີຜ່ານມາ, ພັກກອມມູນິດຈີນ ບຸກບືນສູ້ຊົນຢ່າງບໍ່ລົດລະ, ປ່ຽນແປງອະນາຄົດ ແລະ ຊາຕາກຳຂອງປະຊາຊົນຈີນ ໃນຂັ້ນຮາກຖານ, ບຸກເບີກເສັ້ນທາງອັນຖືກຕ້ອງທີ່ບັນລຸການຟື້ນຟູຄວາມຈະເລີນຮຸ່ງເຮືອງອັນຍິ່ງໃຫຍ່ຂອງປະຊາຊາດຈີນ, ສະແດງໃຫ້ເຫັນພະລັງຊີວິດທີ່ແຂງແຮງຂອງລັດທິມາກ, ສິ່ງຜົນສະທ້ອນເລິກເຊິ່ງ ຕໍ່ຂະບວນວິວັດຂອງປະຫວັດສາດໂລກ,

ໄດ້ຝຶກຝົນຫຼໍ່ຫຼອມພັກກອມມູນິດຈີນທີ່ເຂັ້ມແຂງ. ປັດຈຸບັນ, ພະລັງຊີວິດທີ່ເຂັ້ມແຂງຂອງພາລະກິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ພິສູດໃຫ້ເຫັນເຖິງຄວາມຖືກຕ້ອງຕາມຫຼັກວິທະຍາສາດ ແລະ ລັກສະນະສັດຈະທຳຂອງລັດທິມາກຢ່າງເຕັມສ່ວນ, ສະແດງເຖິງລັກສະນະປະຊາຊົນ ແລະ ລັກສະນະພຶດຕິກຳຂອງລັດທິມາກ, ທັງສະແດງໃຫ້ເຫັນເຖິງລັກສະນະເປີດປະຕູສູ່ພາຍນອກ ແລະ ລັກສະນະຍຸກສະໄໝຂອງລັດທິມາກ.

ວັນທີ 10 ກໍລະກົດ 2026, ຢູ່ຫໍສະພາປະຊາຊົນແຫ່ງຊາດຈີນ, ນະຄອນຫຼວງປັກກິ່ງ, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກຄອມມູນິດຈີນ ໄດ້ພົບປະກັບ ສະຫາຍ ປັກ ແທຊົງ, ກຳມະການຄະນະກຳມະການປະຈຳກົມການເມືອງສູນກາງພັກແຮງງານເກົາຫຼີ, ຮອງປະທານຄະນະກຳມະການກິດຈະການແຫ່ງລັດ ສປປ ເກົາຫຼີ, ນາຍົກລັດຖະມົນຕີ ສປປ ເກົາຫຼີ ທີ່ຢ້ຽມຢາມຈີນຢ່າງເປັນທາງການ. ໂອກາດນີ້, ສະຫາຍ ສີ ຈິ້ນຜິງ ຊີ້ໃຫ້ເຫັນວ່າ: "ສົນທິສັນຍາວ່າດ້ວຍມິດຕະພາບ, ການຮ່ວມມື ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ລະຫວ່າງ ຈີນ-ສປປ ເກົາຫຼີ" ໄດ້ສ້າງພື້ນຖານດ້ານການເມືອງອັນໜັກແໜ້ນ ແລະ ສຳຄັນໃຫ້ແກ່ການປັບປຸງມິດຕະພາບການຕໍ່ສູ້ຮ່ວມກັນທີ່ຊຸບຫຼໍ່ດ້ວຍເລືອດເນື້ອຂອງປະຊາຊົນຈີນ-ສປປ ເກົາຫຼີ. ຂ້າພະເຈົ້າ ແລະ ສະຫາຍ ກິມ ເຈິງອຸນ ໄດ້ບັນລຸຄວາມເຫັນເປັນເອກະພາບກັນ ໃນການຖືເອົາການລະນຶກການລົງນາມໃນສົນທິສັນຍາດັ່ງກ່າວ ຄົບຮອບ 65 ປີ ເປັນໂອກາດທີ່ດີ ເພື່ອນຳພາປະຊາຊົນສອງຊາດສືບທອດ ແລະ ເສີມຂະຫຍາຍມິດຕະພາບອັນເປັນມູນເຊື້ອລະຫວ່າງ ຈີນ-ສປປ ເກົາຫຼີ ພ້ອມທັງໃຫ້ສາຍພົວພັນສອງປະເທດ ມີຊີວິດຊີວາຂຶ້ນຢ່າງຕໍ່ເນື່ອງໃນປະຫວັດສາດອັນໃໝ່. ສະຫາຍ ປັກ ແທຊົງ ຢືນຢັນວ່າ: ສະຫາຍ ກິມ ເຈິງອຸນ ໄດ້ກຳນົດການພັດທະນາການພົວພັນ ສປປ ເກົາຫຼີ-ຈີນ ໃຫ້ກາຍເປັນການພົວພັນຍຸດທະສາດທີ່ເຂັ້ມແຂງທີ່ສຸດ. ສປປ ເກົາຫຼີ ຈະເດັດດ່ຽວຈັດຕັ້ງປະຕິບັດຄວາມເຫັນທີ່ເປັນເອກະພາບກັນທີ່ສຳຄັນ ລະຫວ່າງ ຜູ້ນຳສູງສຸດຂອງສອງພັກ ກໍຄື ສອງປະເທດ, ເດັດດ່ຽວສະໜັບສະໜູນຈີນປົກປ້ອງຜົນປະໂຫຍດແກນກາງໃນບັນຫາຕ່າງໆ ເປັນຕົ້ນແມ່ນບັນຫາໄຕ້ຫວັນ, ລວມເຖິງຄວາມພະຍາຍາມຢ່າງສຸດເພື່ອຊຸກຍູ້ຄວາມສາມັກຄີ, ມິດຕະພາບ ກໍຄື ພາລະກິດສັງຄົມນິຍົມ ລະຫວ່າງ ສປປ ເກົາຫຼີ-ຈີນ ໃຫ້ກ້າວຂຶ້ນສູ່ລະດັບໃໝ່ທີ່ສູງກວ່າເກົ່າ.

ວັນທີ 17 ກໍລະກົດ 2026, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດ ໄດ້ເຂົ້າຮ່ວມພິທີເປີດກອງປະຊຸມປັນຍາປະດິດໂລກ 2026 ວ່າດ້ວຍ ການຄຸ້ມຄອງປັນຍາປະດິດໂລກ ທີ່ນະຄອນຊຽງໄຮ້ ແລະ ກ່າວປາໄສພາຍໃຕ້ຫົວຂໍ້: **"ຮ່ວມກັນສ້າງລະບົບການຄຸ້ມຄອງປັນຍາປະດິດທົ່ວໂລກ ທີ່ມີຄວາມຍຸຕິທຳ ແລະ ສົມເຫດສົມຜົນ"**. ສະຫາຍ ສີ ຈິ້ນຜິງ ໄດ້ມີຄຳເຫັນວ່າ: ຈີນ ເຫັນວ່າປະເທດຕ່າງໆຄວນຍຶດໝັ້ນຖືເອົາຄົນເປັນກົກ ແລະ ຍຶດໝັ້ນແນວຄວາມຄິດທີ່ສ້າງສັນ ເພື່ອເຮັດໃຫ້ປັນຍາປະດິດກາຍເປັນແຫຼ່ງພະລັງຂັບເຄື່ອນສຳຄັນ ທີ່ຊຸກຍູ້ຄວາມຈະເລີນຮຸ່ງເຮືອງຮ່ວມກັນ ແລະ ປົກປັກຮັກສາຄວາມໝັ້ນຄົງຮ່ວມກັນ, ຮ່ວມກັນສ້າງລະບົບການຄຸ້ມຄອງປັນຍາປະດິດທົ່ວໂລກ ທີ່ມີຄວາມຍຸຕິທຳ ແລະ ສົມເຫດສົມຜົນ. ຈີນ ຍິນດີຮ່ວມມືໃນການສ້າງໂອກາດ ແລະ ຮັບມືກັບສິ່ງທ້າທາຍ ແຫ່ງການພັດທະນາປັນຍາປະດິດດ້ວຍທ່າທີທີ່ເປີດກວ້າງ, ມີການເຄື່ອນໄຫວທີ່ຕິດແທດຕົວຈິງ ແລະ ວິໄສທັດເບິ່ງກວ້າງເຫັນໄກກວ່າເກົ່າ ເພື່ອຮ່ວມກັນສ້າງອະນາຄົດທີ່ດີກວ່າເກົ່າ ໃຫ້ແກ່ມວນມະນຸດ. ພ້ອມນີ້, ສະຫາຍ ສີ ຈິ້ນຜິງ ໄດ້ສະເໜີ 04 ຂໍ້ແນວຄວາມຄິດ ຄື: (1) ຍຶດໝັ້ນເປີດປະຕູສູ່ພາຍນອກ, ຮ່ວມມືກັນແບບຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ຂັບເຄື່ອນການພັດທະນາດ້ວຍຫົວຄິດປະດິດສ້າງ; (2) ເພີ່ມສະຕິຕໍ່ຄວາມສ່ຽງ ແລະ ຮັບປະກັນຄວາມໝັ້ນຄົງ; (3) ສົ່ງເສີມການຮຽນຮູ້ແລກປ່ຽນ ເຊິ່ງກັນ ແລະ ກັນ ລະຫວ່າງ ອະລິຍະທຳຕ່າງໆ; (4) ສົ່ງເສີມການຮ່ວມມືກັນ ແລະ ປັບປຸງການບໍລິຫານທົ່ວໂລກ.

**3) ພັກແຮງງານເກົາຫຼີ**

ວັນທີ 03 ກໍລະກົດ 2026, ສະຫາຍ ກິມ ເຈິງ ອຸນ, ຜູ້ນຳສູງສຸດຂອງ ສປປ ເກົາຫຼີ ໄດ້ຕິດຕາມການທົດສອບລູກສອນໄຟນຳວິຖີ, ປືນໃຫຍ່ກອງທັບເຮືອ, ປືນໃຫຍ່ອັດຕະໂນມັດ ແລະ ອຸປະກອນເອເລັກໂຕນິກ ຂອງເຮືອພິຄາດລຳໃໝ່ຂອງກອງທັບເຮືອ ຊື່ ຄັງກອນ ທີ່ມີນ້ຳໜັກ 5,000 ໂຕນ, ພ້ອມທັງໄດ້ ສັ່ງໃຫ້ເຮືອຮົບລຳດັ່ງກ່າວ ສາມາດບັນຈຸເຂົ້າໃນກອງທັບເຮືອພາຍໃນສອງເດືອນຕໍ່ໜ້າ. ສະຫາຍ ກິມ ເຈິງ ອຸນ ກ່າວວ່າ ການທົດລອງຄັ້ງນີ້ ແມ່ນສ່ວນໜຶ່ງຂອງຄວາມພະຍາຍາມເພື່ອກວດສອບ ແລະ ຢືນຢັນຄວາມສາມາດໃນການນຳໃຊ້ລະບົບອາວຸດຫຼາກຫຼາຍຊະນິດໃນການສູ້ຮົບ ແລະ ໄດ້ຮຽກຮ້ອງໃຫ້ເພີ່ມທະວີຄວາມພະຍາຍາມຕື່ມອີກ ເພື່ອຂະຫຍາຍການສະກັດກັ້ນໄພຂົ່ມຂູ່ຈາກອິດທິກຳລັງປໍລະປັກ. ນອກຈາກນີ້, ຍັງໄດ້ຊີ້ນຳໃຫ້ມີການປະຊຸມ ເພື່ອປຶກສາຫາລື ກ່ຽວກັບວຽກງານພັດທະນາອຸດສາຫະກຳການກໍ່ສ້າງເຮືອຮົບ ຢ່າງຕໍ່ເນື່ອງ.

ໃນວັນທີ 09 ກໍລະກົດ 2026, ກອງປະຊຸມຄະນະກຳມະການທະຫານສູນກາງພັກແຮງງານເກົາຫຼີ ຄັ້ງທີ 01 ສະໄໝທີ IX ຈັດຂຶ້ນທີ່ ຫ້ອງວ່າການສູນກາງພັກ, ພາຍໃຕ້ການເປັນປະທານຂອງ ສະຫາຍ ກິມ ເຈິງອຸນ, ເລຂາທິການໃຫຍ່,

ປະທານກິດຈະການແຫ່ງລັດ ພ້ອມດ້ວຍບັນດາສະມາຊິກ ຄະນະກຳມະການທະຫານສູນກາງພັກ, ຄະນະບໍລິຫານງານສູນກາງພັກທີ່ກ່ຽວຂ້ອງ ເຂົ້າຮ່ວມ. ກອງປະຊຸມ ໄດ້ປຶກສາຫາລື ກ່ຽວກັບວຽກງານທາງດ້ານການເມືອງ ແລະ ການທະຫານ ໂດຍສະເພາະ ນະໂຍບາຍໃນການກໍ່ສ້າງກຳລັງປະກອບອາວຸດໃຫ້ແທດເໝາະກັບສະຖານະການການເມືອງໃນປັດຈຸບັນ ທີ່ໄດ້ກຳນົດໄວ້ໃນກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກແຮງງານເກົາຫຼີ. ໃນກອງປະຊຸມດັ່ງກ່າວ, ສະຫາຍ ກິມ ເຈິງອຸນ ໄດ້ເນັ້ນໜັກບັນຫາສຳຄັນຕ່າງໆ ຄື: ກອງທັບຄວນມີບົດບາດນຳພາ ແລະ ເປັນແກນກາງຢ່າງສະໝ່ຳສະເໝີ ໃນການປົກປ້ອງລັດທິສັງຄົມນິຍົມ ເພື່ອການພັດທະນາຢ່າງຮອບດ້ານ; ນະໂຍບາຍທີ່ໝັ້ນຄົງຂອງພັກແຮງງານເກົາຫຼີ ໃນການສ້າງກອງທັບທີ່ມີອຳນາດ ເພື່ອປຸ່ງກອງທັບປະຊາຊົນເກົາຫຼີໃຫ້ກາຍເປັນກອງທັບທີ່ເຂັ້ມແຂງ, ສາມັກຄີເປັນຈິດໜຶ່ງໃຈດຽວ; ໄດ້ເນັ້ນໜັກເຖິງຄວາມຈຳເປັນທີ່ຈະຕ້ອງເອົາໃຈໃສ່ເປັນພິເສດຕໍ່ກອງທັບປະຊາຊົນເກົາຫຼີ ໃຫ້ຢູ່ໃນພື້ນຖານຄວາມກຽມພ້ອມ, ທັນສະໄໝ ແລະ ເສີມຂະຫຍາຍຄວາມສາມາດໃນສິ່ງຄາມຕົວຈິງ. ນອກນັ້ນ, ສະຫາຍ ກິມ ເຈິງອຸນ ໄດ້ລົງນາມເອກະສານ ຈຳນວນ 07 ສະບັບ ກ່ຽວກັບມາດຕະການທາງທະຫານ. ຂະນະດຽວກັນໃນວາລະການປະຊຸມ ຄະນະກຳມະການສູນກາງພັກແຮງງານເກົາຫຼີ ໄດ້ດຳເນີນມາດຕະການສືບສວນ ແລະ ສຳຫຼວດວິໄນ ທ່ານ Pak Hui Chol, ອະດີດຮອງຫົວໜ້າກົມໃຫຍ່ການເມືອງກອງທັບປະຊາຊົນເກົາຫຼີ (ຮັບຜິດຊອບວຽກງານການຈັດຕັ້ງ) ແລະ ຄະນະຈຳນວນໜຶ່ງ ທີ່ໃຊ້ອຳນາດໃນທາງທີ່ຜິດກົດໝາຍ ແລະ ສໍ້ລາດບັງຫຼວງໃນຮູບແບບຕ່າງໆ ເປັນຕົ້ນ: ແຕ່ງຕັ້ງພະນັກງານ, ຊື້ຂາຍຕຳແໜ່ງ ແລະ ຮັບສິນບົນຈຳນວນຫຼວງຫຼາຍ. ຕໍ່ການກະທຳດັ່ງກ່າວ ກອງທັບປະຊາຊົນເກົາຫຼີ ໄດ້ປົດຕຳແໜ່ງ ແລະ ລົງວິໄນພວກກ່ຽວຕາມກົດໝາຍ ສປປ ເກົາຫຼີ.

**4) ພັກກອມມູນິດກູບາ**

ໃນວັນທີ 07-08 ກໍລະກົດ 2026, ທີ່ ນະຄອນນິວຢອກ, ກອງປະຊຸມສະມັດຊາໃຫຍ່ ອົງການສະຫະປະຊາຊາດ, ຄະນະຜູ້ແທນຂັ້ນສູງຂອງ ສ.ກູບາ ນຳໂດຍ ສະຫາຍ ບຣູໂນ ໂຣດຣີເກັດສ໌ ປາຣິຢາ, ກຳມະການກົມການເມືອງສູນກາງພັກ, ລັດຖະມົນຕີກະຊວງການຕ່າງປະເທດ ໄດ້ສະເໜີຍັດຕິຕໍ່ ສປຊ ໃຫ້ຍົກເລີກມາດຕະການປິດລ້ອມທາງດ້ານເສດຖະກິດ, ການຄ້າ ແລະ ການເງິນ ຂອງ ສ.ອາເມຣິກາ ທີ່ມີຕໍ່ ສ.ກູບາ, ຊຶ່ງບັນດາປະເທດທີ່ເປັນສະມາຊິກ ໄດ້ປຶກສາຫາລື ແລະ ລົງຄະແນນສຽງເຫັນດີໃຫ້ຍົກເລີກມາດຕະການດັ່ງກ່າວ ຈຳນວນ 136 ປະເທດ, ງົດອອກສຽງ 30 ປະເທດ ແລະ 9 ປະເທດຄັດຄ້ານ (ສ.ອາເມຣິກາ, ອິດສະຣາແອນ, ອາກຊັງຕິນ, ອູແກຣນ, ປາຣາກວາຍ, ມາຣົກ, ໂກສະຕາຣິກາ, ສ.ເຊັກ ແລະ ມາເຊໂດເນຍເໜືອ).

ວັນທີ 19 ກໍລະກົດ 2026, ສະຫາຍ ນາງ Juana Lilia Delgado Portal, ກຳມະການສູນກາງພັກ, ຜູ້ອຳນວຍການທະນາຄານກາງ ແຫ່ງ ສ.ກູບາ ໄດ້ປະກາດວ່າ: ອີງໃສ່ຄວາມຫຍຸ້ງຍາກທາງດ້ານເສດຖະກິດໃນປັດຈຸບັນ, ສ.ກູບາ ໄດ້ພິມທະນະບັດໃໝ່ (ເງິນໃບໃໝ່) ໃບ 2,000 ເປໂຊ ແລະ 5,000 ເປໂຊ (ຜ່ານມາ ທະນະບັດສູງສຸດ ມີພຽງແຕ່ໃບ 1,000 ເປໂຊ) ແລະ ກຽມພ້ອມຈະນຳໃຊ້ພາຍໃນທ້າຍເດືອນກໍລະກົດ 2026 ເປັນຕົ້ນໄປ. ນອກນັ້ນ, ເພື່ອຄວາມສະດວກໃນການຄຸ້ມຄອງເງິນຕາຜ່ານປະຕູດຽວ, ຈຶ່ງຮຽກຮ້ອງໃຫ້ປະຊາຊົນທົ່ວໄປສາມາດຊຳລະການຊື້ເຄື່ອງປະເພດຕ່າງໆ ຜ່ານການໂອນເຂົ້າ-ອອກ ໃນບັນຊີຂອງຕົນ ຫຼື ບັນຊີຂອງອົງການຈັດຕັ້ງ.

## 2. ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ຄວາມຂັດແຍ່ງລະຫວ່າງ ໄທ ແລະ ກຳປູເຈຍ:** ວັນທີ 10 ກໍລະກົດ 2026, ກະຊວງການຕ່າງປະເທດ ແລະ ການຮ່ວມມືສາກົນກຳປູເຈຍ ໄດ້ລາຍງານວ່າ ທະຫານໄທ ຍັງສືບຕໍ່ລ່ວງລ້ຳອະທິປະໄຕດິນແດນຂອງ ກຳປູເຈຍ ໂດຍໄດ້ສັງລວມເຫດການດັ່ງນີ້: ໃນວັນທີ 05-07 ກໍລະກົດ 2026, ທະຫານໄທ ໄດ້ດຳເນີນການຂຸດຄົ້ນໜ້າດິນເພື່ອສ້າງຄູນ້ຳ ແລະ ວ່າງລວດໜາມ ຢູ່ເຂດຫຼັກໝາຍຊາຍແດນເລກທີ 14 ບ້ານ O’Smach, ເມືອງ Samraong, ແຂວງ Oddar Meanchey; ວັນທີ 09 ກໍລະກົດ 2026, ໄດ້ລ່ວງລ້ຳເຂົ້າໄປດິນແດນກຳປູເຈຍ ເພື່ອວາງລວດໜາມໃກ້ກັບຫຼັກໝາຍຊາຍແດນເລກທີ 22 ບ້ານ ທະມໍດາ, ເມືອງ Banteay Ampil, ແຂວງ Oddar Meanchey ຊຶ່ງການເຄື່ອນໄຫວດັ່ງກ່າວ ເປັນການລະເມີດອະທິປະໄຕຂອງ ກຳປູເຈຍ ຕາມທີ່ໄດ້ກຳນົດໄວ້ໃນແຜນທີ່ ມາດຕາສ່ວນ 1/200,000 ທີ່ສ້າງໂດຍຄະນະກຳມະການກຳນົດເຂດແດນ ລະຫວ່າງ ອິນໂດຈີນ ແລະ ສະຫຍາມ ພາຍໃຕ້ສົນທິສັນຍາຝຣັ່ງ-ສະຫຍາມ ປີ 1904 ແລະ ສົນທິສັນຍາ ປີ 1907. ພ້ອມນັ້ນ, ການກະທຳດັ່ງກ່າວ ຍັງເປັນການລະເມີດບົດບັນທຶກຄວາມເຂົ້າໃຈ ປີ 2000 ກ່ຽວກັບການສຳຫຼວດ ແລະ ແບ່ງເຂດແດນທາງບົກຢູ່ມາດຕາ 5 ແລະ ລະເມີດຖະແຫຼງການຮ່ວມຂອງກອງປະຊຸມພິເສດ ຄັ້ງທີ 3 ຂອງຄະນະກຳມະການຊາຍແດນທົ່ວໄປ (GBC) ໃນເດືອນທັນວາ 2025 ອີກດ້ວຍ.

**ການເມືອງຍີ່ປຸ່ນ:** ກອງປະຊຸມວິສາມັນລັດຖະສະພາ ຄັ້ງທີ 221 ໄດ້ດຳເນີນເປັນເວລາ 150 ວັນ, ຊຶ່ງເລີ່ມແຕ່ວັນທີ 18 ກຸມພາ 2026 ຫາວັນທີ 17 ກໍລະກົດ 2026, ແຕ່ປັດຈຸບັນ ຍັງມີຮ່າງກົດໝາຍ ປະມານ 17 ສະບັບ ທີ່ກຳລັງຢູ່ໃນຂັ້ນຕອນການພິຈາລະນາຮັບຮອງ, ໃນນັ້ນລວມມີກົດໝາຍວ່າດ້ວຍສຳນັກພະລາດຊະວັງສະບັບປັບປຸງ ເພື່ອຮັບປະກັນການມີສະມາຊິກເຊື້ອພະວົງເພດຊາຍທີ່ພຽງພໍໃນການສືບທອດບັນລັງ, ຊຶ່ງປັດຈຸບັນ ໄດ້ຮັບການສະໜັບສະໜູນຈາກພັກຝ່າຍຄ້ານ DPP ເຮັດໃຫ້ມີຄະແນນພຽງພໍແລ້ວທີ່ຈະຮັບຮອງເອົາຮ່າງກົດໝາຍດັ່ງກ່າວຢູ່ສະພາສູງ, ນອກນັ້ນ ກໍມີຮ່າງກົດໝາຍ ກ່ຽວກັບການຫຼຸດຈຳນວນສະມາຊິກສະພາຕ່ຳ 10% ຫຼື 45 ບ່ອນນັ່ງ ແລະ ກົດໝາຍວ່າດ້ວຍການຮັບຮອງເອົາແຂວງໂອຊາກາເປັນນະຄອນຫຼວງສຳຮອງໃນກໍລະນີເກີດເຫດການສຸກເສີນຢູ່ ນະຄອນຫຼວງໂຕກຽວ, ຊຶ່ງປັດຈຸບັນຍັງຖືກຄັດຄ້ານຈາກບັນດາພັກຝ່າຍຄ້ານ. ໃນວັນທີ 07 ກໍລະກົດ 2026, ທ່ານ ນາງ Sanae Takaichi, ນາຍົກລັດຖະມົນຕີ, ປະທານພັກ LDP (Liberal Democratic Party) ແລະ ທ່ານ Hirofumi Yoshimura, ປະທານພັກ JIP (Japan Innovation Party) ຊຶ່ງເປັນພັກຮ່ວມລັດຖະບານ ໄດ້ຕົກລົງເລື່ອນການພິຈາລະນາຮ່າງກົດໝາຍ ກ່ຽວກັບການຫຼຸດຈຳນວນສະມາຊິກສະພາຕ່ຳ, ຄາດວ່າຈະນຳໄປພິຈາລະນາໃນ ກອງປະຊຸມລັດຖະສະພາໃນທ້າຍປີ.

**ສປ ຈີນ ທົດລອງຍິງລູກສອນໄຟ:** ໃນວັນທີ 06 ກໍລະກົດ 2026, ກອງທັບຈີນ ໄດ້ຍິງລູກສອນໄຟຈາກເຮືອດຳນ້ຳນິວເຄຼຍ ລົງໃສ່ນ່ານນ້ຳສາກົນໃນມະຫາສະໝຸດປາຊີຟິກ ຊຶ່ງເປັນການຝຶກຊ້ອມປະຈຳປີຕາມປົກກະຕິ ໂດຍໄດ້ນຳໃຊ້ຫົວຮົບສຳຮອງ ແລະ ບໍ່ເນັ້ນເປົ້າໝາຍໄປຍັງປະເທດໃດປະເທດໜຶ່ງ. ການທົດລອງຄັ້ງນີ້ ໄດ້ສ້າງຄວາມບໍ່ພໍໃຈຕໍ່ອົດສະຕຣາລີ, ນູແວນເຊລັງ ແລະ ຍີ່ປຸ່ນ ທີ່ສະແດງຄວາມເປັນຫ່ວງຕໍ່ຂີດຄວາມສາມາດທາງການທະຫານທີ່ເພີ່ມຂຶ້ນຂອງຈີນ. ອົດສະຕຣາລີ ເອີ້ນການທົດລອງຄັ້ງນີ້ວ່າ ເປັນການສ້າງຄວາມບໍ່ສະຫງົບໃນພາກພື້ນ, ສຳລັບ ນູແວນເຊລັງ ກ່າວວ່າເປັນການພັດທະນາທີ່ບໍ່ເພິ່ງປາຖະໜາ ແລະ ຄັດຄ້ານການນຳໃຊ້ມະຫາສະໝຸດປາຊີຟິກໃຕ້ ເປັນພື້ນທີ່ໃນການທົດລອງຍິງລູກສອນໄຟ, ສ່ວນຍີ່ປຸ່ນ ໄດ້ສະແດງຄວາມເປັນຫ່ວງຕໍ່ການເພີ່ມຂຶ້ນຂອງປະຕິບັດການທາງການທະຫານຂອງຈີນ. ໃນຂະນະດຽວກັນ, ຝ່າຍຈີນ ໄດ້ແຈ້ງວ່າ ການທົດລອງຄັ້ງນີ້ ບໍ່ໄດ້ເກີດຄວາມເສຍຫາຍໃດໆ ແລະ ມີຄວາມປອດໄພພ້ອມທັງໄດ້ແຈ້ງໃຫ້ບັນດາປະເທດທີ່ກ່ຽວຂ້ອງຊາບ ແລະ ຮຽກຮ້ອງໃຫ້ປະເທດອື່ນໆຢ່າແຕກຕື່ນເກີນຄວາມເປັນຈິງ. ເຫດການດັ່ງກ່າວ ອາດຈະເປັນຂໍ້ອ້າງທີ່ເໝາະສົມໃຫ້ ຍີ່ປຸ່ນ, ອົດສະຕຣາລີ ແລະ ນູແວນເຊລັງ ເລັ່ງເພີ່ມງົບປະມານທາງທະຫານພັດທະນາລະບົບຕໍ່ຕ້ານລູກສອນໄຟ ແລະ ເພີ່ມທະວີຄວາມຮ່ວມມືໃນກຸ່ມພັນທະມິດ (ເຊັ່ນ: ກຸ່ມ QUAD) ແລະ ອາດຈະນຳໄປສູ່ການແຂ່ງຂັນສະສົມອາວຸດໃນພາກພື້ນ.

**ກອງປະຊຸມລັດຖະມົນຕີຕ່າງປະເທດຈີນ-ອາຊຽນ:** ໄດ້ຈັດຂຶ້ນໃນວັນທີ 22 ກໍລະກົດ 2026 ທີ່ນະຄອນຫຼວງມະນີລາ, ປະເທດຟີລິບປິນ ພາຍໃຕ້ການເປັນປະທານຮ່ວມຂອງ ທ່ານ ຫວາງ ອີ້, ລັດຖະມົນຕີກະຊວງຕ່າງປະເທດຈີນ (ໃນນາມເປັນປະເທດປະສານງານສາຍພົວພັນ ຈີນ-ອາຊຽນ) ແລະ ທ່ານ ໂມຮາມັດ ຮາຊັນ, ລັດຖະມົນຕີກະຊວງການຕ່າງປະເທດມາເລເຊຍ ໂດຍມີລັດຖະມົນຕີຕ່າງປະເທດ ຈາກບັນດາປະເທດສະມາຊິກອາຊຽນ ແລະ ເລຂາທິການໃຫຍ່ອາຊຽນ ເຂົ້າຮ່ວມ. ທ່ານ ຫວາງ ອີ້ ໄດ້ສະເໜີ 04 ແນວຄວາມຄິດ ຄື: (1) ຮັກສາສະພາບແວດລ້ອມດ້ານສັນຕິພາບ ແລະ ການພັດທະນາຂອງພາກພື້ນ. (2) ເພີ່ມທະວີການພັດທະນາ ຂອງພາກພື້ນ; (03) ຊຸກຍູ້ການພັດທະນາ ທີ່ມີການປະດິດສ້າງ ແລະ ສີຂຽວ; (4) ຍຶດໝັ້ນຖືເອົາຄົນເປັນກົກ. ກອງປະຊຸມ ໄດ້ຮັບຮອງເອົາຖະແຫຼງການຮ່ວມ ກ່ຽວກັບການຮັບມືກັບຜົນກະທົບຕໍ່ພາກພື້ນ ຈາກສະພາບການຜັນປ່ຽນຂອງສະຖານະການຢູ່ພາກພື້ນຕາເວັນອອກກາງ ແລະ ເພີ່ມທະວີການຮ່ວມມືດ້ານພະລັງງານໃນພາກພື້ນ.

## 3. ພາກພື້ນເອີຣົບ-ອາເມຣິກາ

**ຄວາມຂັດແຍ່ງລະຫວ່າງ ອູແກຣນ-ຣັດເຊຍ:** ສອງຝ່າຍ ສືບຕໍ່ໂຈມຕີຕອບໂຕ້ເຊິ່ງກັນ ແລະ ກັນຢ່າງຕໍ່ເນື່ອງ ແລະ ນັບມື້ຮຸນແຮງຂຶ້ນ. ຣັດເຊຍ ໄດ້ເປີດການໂຈມຕີຂະໜາດໃຫຍ່ແບບປະສົມປະສານດ້ວຍໂດຣນ ແລະ ລູກສອນໄຟໃສ່ອູແກຣນ ໃນຂອບເຂດທົ່ວປະເທດ ໂດຍມີເປົ້າໝາຍເພື່ອທຳລາຍພື້ນຖານການຜະລິດອາວຸດ, ສາງເກັບມ້ຽນອາວຸດ ລວມທັງເຂດທ່າເຮືອ ພ້ອມທັງໂຈມຕີກຳປັ່ນຂົນສົ່ງສິນຄ້າ, ສາງເກັບມ້ຽນນ້ຳມັນ ຢູ່ເຂດ Izma, Chernomorsk ແລະ Yuzhny ໃນພາກພື້ນ Odesa. ນອກນັ້ນຍັງໄດ້ໂຈມຕີໂຮງງານໄຟຟ້າ ໃນນະຄອນຫຼວງກີແອບ ແລະ ເມືອງອື່ນໆ. ສ່ວນອູແກຣນ ໄດ້ຕອບໂຕ້ກັບດ້ວຍການໃຊ້ໂດຣນ ໂຈມຕີໂຮງກັ່ນນ້ຳມັນ Omsk ຂອງຣັດເຊຍໃນໄຊບີເຣຍ ຊຶ່ງຢູ່ໄກຈາກພື້ນທີ່ອູແກຣນ ປະມານ 2,700 ກິໂລແມັດ. ການໂຈມຕີດັ່ງກ່າວ ສະແດງໃຫ້ເຫັນວ່າ ອູແກຣນ ກຳລັງເນັ້ນໃສ່ການທຳລາຍດ້ານພະລັງງານຂອງ ຣັດເຊຍ, ນອກນັ້ນ ໄດ້ໂຈມຕີເລິກເຂົ້າໄປໃນນະຄອນຫຼວງມົດສະກູ ເປັນຕົ້ນແມ່ນ ບ່ອນ

ເກັບມ້ຽນໂດຣນ ແລະ ອຸປະກອນທາງທະຫານ ລວມທັງໂຈມຕີກຳປັ່ນບັນທຸກນ້ຳມັນ ແລະ ສິນຄ້າ ໃນທະເລດຳ ແລະ ທະເລອາຊອບ ເພື່ອຕັດການສົ່ງອອກນ້ຳມັນ ທີ່ເປັນແຫຼ່ງລາຍຮັບຫຼັກຂອງຣັດເຊຍ. ຂະນະທີ່, ທ່ານ ວະລາດີເມຍ ເຊເລນສະກີ, ເນັ້ນວ່າ ອູແກຣນ ຕ້ອງການລະບົບປ້ອງກັນອາກາດເພີ່ມ ໂດຍສະເພາະ Patriot ເພື່ອຮັບມືລູກສອນໄຟຂອງຣັດເຊຍ. ສ່ວນການເຈລະຈາເພື່ອຢຸດຕິຄວາມຂັດແຍ່ງ ຍັງບໍ່ມີຄວາມຄືບໜ້າທີ່ເປັນຮູບປະທຳ.

ຂະນະທີ່, ເອີຣົບ ສືບຕໍ່ເພີ່ມແຮງກົດດັນຕໍ່ມາດຕະການຂວ້ຳບາດທາງດ້ານເສດຖະກິດຕໍ່ ຣັດເຊຍ ພ້ອມທັງໃຫ້ການສະໜັບສະໜູນທາງດ້ານການທະຫານໃຫ້ອູແກຣນ. ເປັນຕົ້ນແມ່ນ ສ.ອາເມຣິກາ ໄດ້ອະນຸຍາດ ແລະ ໃຫ້ສິດໃນການຜະລິດລູກສອນໄຟປ້ອງກັນທາງອາກາດ Pratriot ຂອງຕົນ, ສ່ວນເຢຍລະມັນ ຈະສະໜອງທຶນໃນການຈັດຊື້ໂດຣນຈຳນວນ 50.000 ລຳ ແລະ ຝຣັ່ງ ປະກາດອະນຸຍາດໃຫ້ອູແກຣນ ຜະລິດອາວຸດຝຣັ່ງບາງປະເພດພາຍໃນປະເທດ ລວມມີລູກສອນໄຟ SCALP, ລະເບີດນຳວິຖີ AASM ແລະ ລູກສອນໄຟປ້ອງກັນອາກາດ Aster ພາຍຫຼັງອູແກຣນ ໄດ້ສັ່ງຊື້ລະບົບປ້ອງກັນທາງອາກາດລຸ້ນໃໝ່ Franco-Italian ແລະ ເຮືອບິນສູ້ຮົບ Rafale. ພ້ອມດຽວກັນນີ້, ດານມາກ, ຝຣັ່ງ, ເຢຍລະມັນ, ອີຕາລີ, ໂຮນລັງ, ນອກແວ, ແອັດສະປາຍ, ຊູແອັດ, ອັງກິດ ແລະ ອູແກຣນ ໄດ້ປະກາດວ່າ ຈະສ້າງຕັ້ງກຸ່ມພັນທະມິດປ້ອງກັນທາງອາກາດ ເພື່ອຮ່ວມກັນພັດທະນາລະບົບຕໍ່ຕ້ານລູກສອນໄຟລຸ້ນໃໝ່ ເພື່ອປົກປ້ອງເອີຣົບຈາກໄພຄຸກຄາມໃນອະນາຄົດ. ໃນເວລາດຽວກັນ, ສະພາບການເມືອງພາຍໃນອູແກຣນ ກຳລັງເກີດຄວາມສັບສົນເນື່ອງຈາກສະມາຊິກສະພາອູແກຣນ ກຳລັງກຽມພ້ອມສຳລັບການລົງຄະແນນສຽງເລືອກຕັ້ງເອົາຄະນະລັດຖະບານຊຸດໃໝ່ ຫຼັງຈາກທ່ານ ວະລາດີເມຍ ເຊເລນສະກີ, ໄດ້ປົດຕຳແໜ່ງນາຍົກລັດຖະມົນຕີ ຄົນປັດຈຸບັນ.

**ເຢຍລະມັນ:** ໃນວັນທີ 04 ກໍລະກົດ 2026, ພັກ Alternative for Germany (AfD) (ເປັນພັກຂວາຈັດ ຝ່າຍຄ້ານທີ່ໃຫຍ່ທີ່ສຸດໃນສະພາ ທີ່ໄດ້ຮັບຄວາມນິຍົມເພີ່ມຂຶ້ນຢ່າງຫຼວງຫຼາຍ ໂດຍສະເພາະໃນພາກຕາເວັນອອກຂອງປະເທດ) ໄດ້ຈັດກອງປະຊຸມໃຫຍ່ ທີ່ ເມືອງ Erfurt, ປະເທດ ເຢຍລະມັນ. ກອງປະຊຸມໄດ້ມີມະຕິເລືອກເອົາ ທ່ານ ນາງ Alice Weidel ໃຫ້ກັບມາດຳລົງຕຳແໜ່ງຫົວໜ້າພັກອີກຄັ້ງດ້ວຍຄະແນນສຽງສູງເຖິງ 81.3%, ຂະນະທີ່ ທ່ານ Tino Chrupalla ໄດ້ຮັບຄະແນນສຽງ 70% ໃຫ້ກັບມາດຳລົງຕຳແໜ່ງຫົວໜ້າພັກຮ່ວມອີກຄັ້ງ ຊຶ່ງໄດ້ສະທ້ອນໃຫ້ເຫັນຄວາມເປັນເອກະພາບພາຍໃນພັກ ແລະ ຄວາມເຊື່ອໝັ້ນຂອງ ສະມາຊິກຕໍ່ກັບຜູ້ນຳຊຸດເກົ່າ. ໃນເວລາດຽວກັນ, ໄດ້ມີຜູ້ປະທ້ວງຫຼາຍໝື່ນຄົນ ທີ່ເປັນກຸ່ມຕໍ່ຕ້ານ ພັກ AfD ໄດ້ລວມຕົວກັນບໍລິເວນອ້ອມຮອບສະຖານທີ່ປະຊຸມ ເພື່ອສະແດງຈຸດຢືນ ກໍຄື ການຄັດຄ້ານນະໂຍບາຍ ແລະ ແນວຄິດຊາດນິຍົມຂອງພັກ, ຜູ້ຊຸມນຸມບາງສ່ວນໄດ້ພະຍາຍາມປິດກັ້ນເສັ້ນທາງເຂົ້າສະຖານທີ່ປະຊຸມ ແລະ ເກີດການປະທະກັບເຈົ້າໜ້າທີ່ຕຳຫຼວດ ເຮັດໃຫ້ມີຜູ້ບາດເຈັບ ແລະ ຖືກຈັບກຸມຈຳນວນໜຶ່ງ. ຢ່າງໃດກໍຕາມ, ກອງປະຊຸມໃຫຍ່ຂອງພັກຍັງດຳເນີນຕໍ່ໄປຕາມກຳນົດ. ເຫດການຄັ້ງນີ້, ໄດ້ສະທ້ອນໃຫ້ເຫັນເຖິງຄວາມແຕກແຍກທາງການເມືອງພາຍໃນ ເຢຍລະມັນ ທີ່ຍັງຄົງຮຸນແຮງ ເຖິງແມ່ນວ່າ ພັກ AfD ຈະໄດ້ຮັບຄວາມນິຍົມເພີ່ມຂຶ້ນໃນບາງພື້ນທີ່, ແຕ່ກໍຍັງປະເຊີນກັບແຮງຕໍ່ຕ້ານຈາກປະຊາຊົນຈຳນວນຫຼາຍທີ່ກັງວົນຕໍ່ຈຸດຢືນ ແລະ ນະໂຍບາຍຂອງພັກ ໃນບັນຫາການຍ້າຍຖິ່ນຖານ, ສິດທິມະນຸດ ແລະ ທິດທາງປະຊາທິປະໄຕຂອງປະເທດ.

**ຜົນກອງປະຊຸມສຸດຍອດນາໂຕ້ ປະຈຳປີ 2026:** ກອງປະຊຸມໄດ້ຈັດຂຶ້ນໃນລະຫວ່າງວັນທີ 07-08 ກໍລະກົດ 2026 ທີ່ ອັງກາຣາ, ປະເທດຕວັກກີ ໂດຍມີບັນດາຜູ້ນຳຂອງປະເທດສະມາຊິກເຂົ້າຮ່ວມ ລວມທັງ ທ່ານ ວະລາດີເມຍ ເຊເລນສະກີ, ປະທານາທິບໍດີອູແກຣນ. ກອງປະຊຸມຄັ້ງນີ້ ໄດ້ປຶກສາຫາລື ກ່ຽວກັບ 05 ບັນຫາສຳຄັນ ຄື: (1) ນາໂຕ້ ໄດ້ຮຽກຮ້ອງໃຫ້ອີຣານ ເຄົາລົບສິດເສລີພາບໃນການແລ່ນເຮືອຜ່ານຊ່ອງແຄບຮໍມຸສ ແລະ ຢ້ຳວ່າ ອີຣານ ຕ້ອງບໍ່ໄດ້ຮັບການອະນຸຍາດໃຫ້ຄອບຄອງອາວຸດນິວເຄຼຍ; (2) ຜູ້ນຳນາໂຕ້ ເຫັນດີເປັນເອກະພາບຈະເພີ່ມງົບປະມານດ້ານປ້ອງກັນປະເທດ ແລະ ຈະພັດທະນາຂີດຄວາມສາມາດທາງດ້ານອຸດສາຫະກຳການທະຫານຂອງປະເທດພັນທະມິດ ລວມທັງລະບົບປ້ອງກັນໄພທາງອາກາດ ແລະ ລູກສອນໄຟ; (3) ນາໂຕ້ ສັນຍາຈະສະໜອງວັດຖຸອຸປະກອນທາງການທະຫານ ມູນຄ່າ 70 ຕື້ເອີໂຣ (80 ຕື້ໂດລາສະຫະລັດ) ໃຫ້ແກ່ອູແກຣນ; (4) ບັນຫາການອ້າງສິດເໜືອດິນແດນ Greenland ຊຶ່ງ ສ.ອາເມຣິກາ ໄດ້ສະເໜີຂໍສິດໃນການຄຸ້ມຄອງເຂດດັ່ງກ່າວ, ແຕ່ດານມາກ ບໍ່ຍິນຍອມ; (5) ສ.ອາເມຣິກາ ສະແດງຄວາມບໍ່ພໍໃຈຕໍ່ກຸ່ມນາໂຕ້ ທີ່ບໍ່ໃຫ້ການຊ່ວຍເຫຼືອຕົນ ໃນການເຮັດສົງຄາມກັບ ອີຣານ.

**ການເມືອງຮົງກາຣີ:** ໃນວັນທີ 13 ກໍລະກົດ 2026, ລັດຖະສະພາຮົງກາຣີ ໄດ້ຜ່ານການດັດແກ້ລັດຖະທຳມະນູນຄັ້ງທີ 17 ເພື່ອປະຕິຮູບລະບົບຕຸລາການ, ການຕ້ານການສໍ້ລາດບັງຫຼວງ ແລະ ສະຖາບັນ ທີ່ສືບທອດຈາກລັດຖະບານສະໄໝ ທ່ານ Viktor Orbán. ພ້ອມນີ້, ຍັງມີການລົງປະຊາມະຕິ ເພື່ອປົດປະທານາທິບໍດີ Tamás Sulyok ອອກຈາກຕຳແໜ່ງ ໂດຍມີສະມາຊິກສະພາ ເຫັນດີ 139 ທ່ານ, ຄັດຄ້ານ 06 ທ່ານ ແຕ່ພັກ Fidesz, ພັກ Hungarian Civic

Alliance ແລະ ພັກ Christian Democratic ບໍ່ໄດ້ເຂົ້າຮ່ວມ ໂດຍກ່າວວ່າ ການແກ້ໄຂນີ້ເປັນການລະເມີດລັດຖະທຳມະນູນ ແລະ ຖືກອອກແບບເພື່ອຜົນປະໂຫຍດທາງການເມືອງ. ການລົງປະຊາມະຕິ ໄດ້ຮັບການສະໜັບສະໜູນສ່ວນຫຼາຍຈາກສະມາຊິກພັກ Tisza ນຳໂດຍນາຍົກລັດຖະມົນຕີ Peter Magyar. ການແກ້ໄຂລັດຖະທຳມະນູນຄັ້ງນີ້ລວມມີການຍຸຕິວາລະປະທານາທິບໍດີ ແລະ ໃຫ້ສະພາເລືອກປະທານາທິບໍດີໃໝ່ພາຍໃນ 30 ວັນ, ຈຳກັດວາລະສະມາຊິກສະພາໃຫ້ 03 ວາລະ (ແຕ່ລະວາລະໃຫ້ມີອາຍຸ 04 ປີ), ກຳນົດອາຍຸສູງສຸດຂອງສະມາຊິກສະພາ 70 ປີ, ກຳນົດມາດຕະການເພື່ອເສີມສ້າງຄວາມເປັນເອກະລາດຂອງຕຸລາການ ແລະ ການກວດສອບການເຮັດວຽກຂອງອົງການລັດ. ປະທານາທິບໍດີ Sulyok ປະຕິເສດທີ່ຈະລົງນາມໃນການແກ້ໄຂນີ້ ແລະ ອາດສົ່ງເອກະສານໃຫ້ສານລັດຖະທຳມະນູນພິຈາລະນາ. ພັກ Fidesz ນຳໂດຍ ທ່ານ Viktor Orban ຢູ່ຝ່າຍສະໜັບສະໜູນປະທານາທິບໍດີ ແລະ ໄດ້ຈັດຊຸມນຸມໃຫຍ່ໃນນະຄອນຫຼວງ Budapest ເພື່ອຄັດຄ້ານນະໂຍບາຍຂອງ ທ່ານ Magyar.

**ສ.ອາເມຣິກາ ແລະ ອາຣັບບີ ຊາອູດິດ ບັນລຸຂໍ້ຕົກລົງການຮ່ວມມືດ້ານນິວເຄຼຍ:** ວັນທີ 22 ກໍລະກົດ 2026, ທ່ານ ໂດນັນ ທຣຳ ໄດ້ປະກາດວ່າ ໄດ້ບັນລຸຂໍ້ຕົກລົງການຮ່ວມມືດ້ານນິວເຄຼຍເພື່ອພົນລະເຮືອນ (ເພື່ອຜະລິດພະລັງງານ) ໂດຍບໍລິສັດຂອງ ສ.ອາເມຣິກາ ຈະເປັນຜູ້ຈັດຫາເຕັກໂນໂລຊີນິວເຄຼຍ ໃຫ້ແກ່ ອາຣັບບີ ຊາອູດິດ. ຂໍ້ຕົກລົງດັ່ງກ່າວເປັນໄປຕາມມາດຕາ 123 ຂອງກົດໝາຍພະລັງງານປະລະມານູ ປີ 1954 ແລະ ຂໍ້ຕົກລົງການຄຸ້ມຄອງທະວິພາຄີ, ສ.ອາເມຣິກາ ກ່າວວ່າ ຂໍ້ຕົກລົງເຫຼົ່ານີ້ ສະແດງໃຫ້ເຫັນເຖິງຄວາມຕັ້ງໃຈຮ່ວມກັນໃນການສົ່ງເສີມການພົວພັນທາງດ້ານການຄ້າລະຫວ່າງສອງປະເທດ ແລະ ຄວາມເຊື່ອໝັ້ນໃນມາດຕະຖານສູງສຸດດ້ານຄວາມປອດໄພ ແລະ ການບໍ່ແຜ່ຂະຫຍາຍອາວຸດນິວເຄຼຍ ໂດຍອາໄສເຕັກໂນໂລຊີນິວເຄຼຍ ແລະ ນັກວິທະຍາສາດທີ່ດີທີ່ສຸດໃນໂລກ. ຢ່າງໃດກໍຕາມ, ຂໍ້ຕົກລົງນີ້ຈະເຮັດໃຫ້ ອາຣັບບີ ຊາອູດິດ ສາມາດເພີ່ມຄວາມເຂັ້ມຂຸ້ນແຮ່ທາດຢູເຣນຽມພາຍໃນປະເທດເອງໄດ້ ແທນທີ່ຈະນຳເຂົ້າພະລັງງານຈາກ ສ.ອາເມຣິກາ ພຽງຢ່າງດຽວ. ສິ່ງດັ່ງກ່າວ, ເປັນການເພີ່ມຄວາມເຄັ່ງຕຶງ ທີ່ອາດນຳໄປສູ່ການແຂ່ງຂັນກັນຄອບຄອງເຕັກໂນໂລຊີນິວເຄຼຍ ໃນພາກພື້ນຕາເວັນອອກກາງ.

**ການເມືອງອັງກິດ:** ວັນທີ 20 ກໍລະກົດ 2026, ທ່ານ Andy Burnham ໄດ້ເຂົ້າຮັບຕຳແໜ່ງເປັນຫົວໜ້າພັກແຮງງານ ແລະ ນາຍົກລັດຖະມົນຕີຄົນໃໝ່ ຂອງຣາຊະອານາຈັກອັງກິດ ຢ່າງເປັນທາງການ ພ້ອມທັງປະກາດປັບປຸງຄະນະລັດຖະມົນຕີຄັ້ງໃຫຍ່, ໂດຍໄດ້ປົດຕຳແໜ່ງບັນດາລັດຖະມົນຕີໃນຄະນະລັດຖະບານຊຸດກ່ອນຫຼາຍຄົນ ທີ່ເປັນບຸກຄົນໃກ້ຊິດ ແລະ ຜູ້ສະໜັບສະໜູນ ທ່ານ Keir Starmer, ອາດີດນາຍົກລັດຖະມົນຕີ ເພື່ອຈັດຕັ້ງກຸ່ມບໍລິຫານຊຸດໃໝ່ທີ່ສອດຄ່ອງກັບແນວທາງການເຮັດວຽກຂອງຕົນເອງຫຼາຍຂຶ້ນ. ນອກນັ້ນ, ທ່ານ Andy Burnham ຍັງໄດ້ເປີດເຜີຍແຜນພັດທະນາ ໄລຍະ 10 ປີ ເພື່ອຮັບມືກັບບັນຫາຄ່າຄອງຊີບທີ່ປະຊາຊົນກຳລັງປະເຊີນຢູ່ ໂດຍເນັ້ນໜັກໄປທີ່ການຫຼຸດຄ່າຄອງຊີບຂອງຄົວເຮືອນ, ສ້າງໂອກາດການຈ້າງງານ ແລະ ກະຕຸ້ນການຂະຫຍາຍຕົວຂອງເສດຖະກິດ ເພື່ອຍົກລະດັບຄຸນນະພາບຊີວິດຂອງ ປະຊາຊົນໃນໄລຍະຍາວ. ພ້ອມນັ້ນ, ກໍໄດ້ສົ່ງສັນຍານທີ່ຊັດເຈນວ່າ ລັດຖະບານພາຍໃຕ້ການນຳພາຂອງຕົນ ຈະດຳເນີນນະໂຍບາຍທີ່ອ່ຽງຊ້າຍຫຼາຍຂຶ້ນ ໂດຍໃຫ້ຄວາມສຳຄັນກັບການຂະຫຍາຍບົດບາດ ຂອງພາກລັດໃນການເບິ່ງແຍງສະຫວັດດີການສັງຄົມ, ຫຼຸດຄວາມແຕກໂຕນທາງສັງຄົມ, ເພີ່ມການລົງທຶນດ້ານສາທາລະນະສຸກ, ການສຶກສາ ແລະ ການຄຸ້ມຄອງແຮງງານ, ຊຶ່ງຖືວ່າເປັນການຫັນທິດທາງຈາກລັດຖະບານຊຸດກ່ອນໃນຫຼາຍດ້ານ.

## 4.ພາກພື້ນຕາເວັນອອກກາງ

**ສະພາບຄວາມເຄັ່ງຕຶງໃນຕາເວັນອອກກາງ:** ສະຖານະການຍັງສືບຕໍ່ເຄັ່ງຮ້ອນຍ້ອນ ສ.ອາເມຣິກາ ສືບຕໍ່ໂຈມຕີເປົ້າໝາຍຫຼາຍແຫ່ງຂອງອີຣານ ເປັນຕົ້ນແມ່ນ ລະບົບປ້ອງກັນໄພທາງອາກາດ, ສະຖານີເຣດາແຄມຝັ່ງ ແລະ ເຮືອຂະໜາດນ້ອຍຂອງອີຣານ ເພື່ອຕອບໂຕ້ອີຣານທີ່ໂຈມຕີເຮືອບັນທຸກສິນຄ້າ ກ່ອນໜ້ານີ້. ພ້ອມດຽວກັນນັ້ນ, ທ່ານ ໂດນັນ ທຣຳ, ປະທານາທິບໍດີ ສ.ອາເມຣິກາ ໄດ້ປະກາດຍຸດຕິຂໍ້ຕົກລົງຍຸດຍິງຊົ່ວຄາວ ທີ່ທັງສອງຝ່າຍລົງນາມຮ່ວມກັນໃນວັນທີ 19 ມິຖຸນາ 2026 ພ້ອມທັງປະກາດປິດລ້ອມການຂົນສົ່ງທາງເຮືອຂອງອີຣານຄືນໃໝ່ ແລະ ຖອນໃບອະນຸຍາດຂາຍນ້ຳມັນດິບຂອງອີຣານ, ສະເໜີໃຫ້ເກັບຄ່າທຳນຽມ 20% ເພື່ອຄຸ້ມຄອງ ແລະ ຮັກສາຄວາມປອດໄພໃນຊ່ອງແຄບຮໍມຸດ. ຂະນະທີ່, ອີຣານ ໄດ້ສົ່ງໜັງສືປະທ້ວງເຖິງສະພາຄວາມໝັ້ນຄົງສະຫະປະຊາຊາດ (UNSC) ໂດຍກ່າວຫາວ່າ ສ.ອາເມຣິກາ ລະເມີດກົດບັດສະຫະປະຊາຊາດ ແລະ ກົດໝາຍສາກົນຢ່າງຈະແຈ້ງ, ການໂຈມຕີຂອງ ສ.ອາເມຣິກາ ເປັນການລະເມີດ MoU ທີ່ໄດ້ລົງນາມຮ່ວມກັນ. ນອກຈາກນີ້, ອີຣານ ໄດ້ປະກາດປິດຊ່ອງແຄບຮໍມຸດອີກຄັ້ງ ເລີ່ມແຕ່ວັນທີ 11 ກໍລະກົດ 2026 ພາຍຫຼັງໂຈມຕີເຮືອບັນທຸກສິນຄ້າທີ່ຈົດທະບຽນໃນປະເທດໄຊປຣັດ ແລ່ນຜ່ານເສັ້ນໂດຍບໍ່ໄດ້ຮັບອະນຸຍາດ ລວມທັງໂຈມຕີຖານທັບຂອງ ສ.ອາເມຣິກາ ຢູ່ ກູເວດ,ຈໍແດນ, ຊອກດານີ. ການປະທະກັນຄັ້ງໃໝ່ ໄດ້ສ້າງ

ຄວາມບໍ່ໝັ້ນຄົງຢູ່ຂົງເຂດອ່າວເປີເຊຍ ແລະ ການປິດຊ່ອງແຄບຮໍມຸດ ຂອງອີຣານ ໄດ້ສົ່ງຜົນໃຫ້ລາຄານໍ້າມັນເພີ່ມສູງຂຶ້ນ ໂດຍລາຄານໍ້າມັນດິບ ປັບຕົວເພີ່ມຂຶ້ນປະມານ 1% ຄິດເປັນມູນຄ່າປະມານ 78.80 ໂດລາສະຫະລັດຕໍ່ບາເຣວ. ການຕົກຕໍ່າທາງດ້ານເສດຖະກິດ ແລະ ລາຄາສິນຄ້າທີ່ເພີ່ມສູງຂຶ້ນ ອາດສົ່ງຜົນກະທົບຕໍ່ຖານສຽງຂອງ ທ່ານ ທຣຳ ກ່ອນຈະມີການເລືອກຕັ້ງສະພາສູງຂອງ ສ.ອາເມຣິກາ ໃນເດືອນພະຈິກ 2026 ທີ່ຈະມາເຖິງນີ້.

ນອກຈາກນີ້, ຄວາມຂັດແຍ່ງລະຫວ່າງ ກຸ່ມຮູຕີ ໃນເຢເມນ ແລະ ອາຣັບບີ ຊາອຸດິດ ໄດ້ກັບມາເຄັ່ງຕຶງອີກຄັ້ງ ສືບເນື່ອງມາຈາກ ກຸ່ມຮູຕີ ກ່າວຫາວ່າ ອາຣັບບີ ຊາອຸດິດ ໄດ້ໂຈມຕີສະໜາມບິນສາກົນຊານາ ໃນເຢເມນ ເພື່ອສະກັດກັ້ນບໍ່ໃຫ້ຍົນໂດຍສານ ຂອງອີຣານລົງຈອດ ໃນວັນທີ 20 ກໍລະກົດ 2026 ທີ່ຜ່ານມາ. ຫຼັງຈາກນັ້ນ, ກຸ່ມຮູຕີ ໄດ້ຍິງລູກສອນໄຟ ແລະ ສິ່ງໂດຣນ ໂຈມຕີສະໜາມບິນອັບຮາ ຂອງ ອາຣັບບີ ຊາອຸດິດ ແລະ ໄດ້ປະກາດປິດລ້ອມທາງທະເລ ພ້ອມທັງໂຈມຕີເຮືອບັນທຸກນໍ້າມັນ ຈຳນວນ 02 ລຳທີ່ກ່ຽວຂ້ອງກັບ ອາຣັບບີ ຊາອູດິດ ທີ່ແລ່ນຜ່ານຊ່ອງແຄບ ບັບອັນມັນເດບ ໃນທະເລແດງ. ຂະນະທີ່, ອາຣັບບີ ຊາອຸດິດ ໄດ້ອອກມາປະນາມການກະທຳດັ່ງກ່າວ ແລະ ພ້ອມຈະໃຊ້ມາດຕະການທີ່ຈຳເປັນເພື່ອປົກປ້ອງກຳປັ່ນຂອງຕົນຕາມກົດໝາຍສາກົນ ແລະ ສະໜັບສະໜູນຂະບວນການສັນຕິພາບ ຂອງອົງການສະຫະປະຊາຊາດ. ສະພາບການດັ່ງກ່າວ ມີຄວາມສ່ຽງສູງທີ່ຈະຂະຫຍາຍເປັນວົງກວ້າງ ຊຶ່ງອາດພາໃຫ້ເກີດສົງຄາມໃນພາກພື້ນເຕັມຮູບແບບ ເນື່ອງຈາກມີການປະເຊີນໜ້າກັນຢູ່ຫຼາຍແນວຮົບ ເປັນຕົ້ນ: ສ.ອາເມຣິກາ-ອີຣານ, ອິດສະຣາແອນ-ກຸ່ມຮິດບານເລາະ ແລະ ອາຣັບບີ ຊາອຸດິດ-ກຸ່ມຮູຕີ ລວມທັງສົ່ງຜົນກະທົບໂດຍກົງຕໍ່ຄວາມໝັ້ນຄົງດ້ານພະລັງງານ ກໍຄືເສດຖະກິດການຄ້າຂອງໂລກ ໂດຍສະເພາະ ຕໍ່ລາຄານໍ້າມັນທີ່ເພີ່ມຂຶ້ນ.

## II. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ

### 1. ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ຈັດກອງປະຊຸມເຜີຍແຜ່ເຊື່ອມຊຶມ ມະຕິກອງປະຊຸມຄົບຄະນະຄັ້ງທີ 2 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ແລະ ຄຳແນະນຳການຈັດຕັ້ງປະຕິບັດກົດລະບຽບພັກ ປປ ລາວ





ໃນວັນທີ 09 ກໍລະກົດ 2026, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມເຜີຍແຜ່ເຊື່ອມຊຶມ ມະຕິກອງປະຊຸມຄົບຄະນະ ຄັ້ງທີ 2 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ແລະ ຄຳແນະນຳການຈັດຕັ້ງປະຕິບັດກົດລະບຽບພັກ ສະໄໝ XII. ໃຫ້ກຽດເປັນປະທານໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ; ມີບັນດາສະຫາຍໃນຄະນະບໍລິຫານງານພັກ, ຄະນະກົມ, ພ້ອມດ້ວຍພະນັກງານຫຼັກແຫຼ່ງ ຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ສະຫາຍ ບຸນເຫຼືອ ພັນດານຸວົງ, ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ຍົກໃຫ້ເຫັນເນື້ອໃນສຳຄັນຂອງ ມະຕິກອງປະຊຸມຄົບຄະນະ ຄັ້ງທີ 2 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ເປັນຕົ້ນແມ່ນ: ການພິຈາລະນາຮັບຮອງເອົາແຜນດຳເນີນງານຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII; ແບບແຜນວິທີເຮັດວຽກ ແລະ ການພົວພັນລະຫວ່າງ ເລຂາຄະນະບໍລິຫານງານພັກ ກັບ ປະທານຄະນະກຳມະການປົກຄອງເມືອງ, ນະຄອນ; ການສ້າງຕັ້ງຕາແສງ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງຄະນະພັກຮາກຖານ; ແຜນຜັນຂະຫຍາຍ ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ເພື່ອສ້າງຄວາມຮັບຮູ້, ຄວາມເຂົ້າໃຈເປັນເອກະພາບຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຕໍ່ການນຳພາ-ຊີ້ນຳ ຂອງຂັ້ນເທິງ ໃນການກຳນົດທິດທາງ, ໜ້າວຽກຈຸດສຸມຕ່າງໆ ເພື່ອເປັນເອກະພາບສູງ, ບຸກທະລຸການພັດທະນາປະເທດຊາດໃນສະເພາະໜ້າ ແລະ ຍາວນານ.

ພ້ອມກັນນັ້ນ, ສະຫາຍ ຍັງໄດ້ສືບຕໍ່ເຜີຍແຜ່ ເນື້ອໃນກົດລະບຽບພັກ, ຄຳແນະນຳ ເລກທີ 303/ຄຈສພ, ລົງວັນທີ 20 ພຶດສະພາ 2026 ກ່ຽວກັບ ການຈັດຕັ້ງປະຕິບັດກົດລະບຽບຂອງພັກປະຊາຊົນປະຕິວັດລາວ ສະໄໝທີ XII, ປະກອບດ້ວຍ 15 ໝວດ, 64 ມາດຕາ; ໂດຍໄດ້ຍົກໃຫ້ເຫັນຄວາມໝາຍ-ຄວາມສຳຄັນ, ບັນດາໝວດ ແລະ ມາດຕາ ທີ່ກອງປະຊຸມໃຫຍ່ຂອງພັກ ໄດ້ເປັນເອກະພາບປັບປຸງດັດແປງໃໝ່.

## 2. ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ມອບສານອວຍພອນວັນສ້າງຕັ້ງພັກກອມມູນິດຈີນ ຄົບຮອບ 105 ປີ



ວັນທີ 01 ກໍລະກົດ 2026, ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ນຳພາຄະນະ ເຂົ້າຊົມເຊີຍ ແລະ ມອບສານອວຍພອນຈາກ ຄະນະບໍລິຫານງານສູນກາງພັກ ປປ ລາວ ເຖິງ ຄະນະກຳມະການສູນກາງພັກກອມມູນິດຈີນ ເນື່ອງໃນໂອກາດວັນສ້າງຕັ້ງພັກກອມມູນິດຈີນ ຄົບຮອບ 105 ປີ (1/7/1921-1/7/2026), ໄດ້ຮັບການຕ້ອນຮັບໂດຍ ສະຫາຍ ນາງ ຟາງຫົງ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປ ຈີນ ປະຈຳ ສປປ ລາວ ພ້ອມດ້ວຍຄະນະ, ທີ່ສະຖານທູດ ສປ ຈີນ ປະຈຳ ສປປ ລາວ.

ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຊົມເຊີຍຢ່າງສຸດໃຈຕໍ່ພັກກອມມູນິດຈີນ ທີ່ໄດ້ນຳພາປະຊາຊົນຈີນ ບັນລຸຜົນສຳເລັດອັນມະຫັດສະຈັນຢ່າງຮອບດ້ານ ທີ່ປະຈັກຕາຕໍ່ຊາວໂລກຕະຫຼອດໄລຍະ 105 ປີຜ່ານມາ, ໂດຍສະເພາະ ນັບແຕ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ 18 ຂອງພັກກອມມູນິດຈີນເປັນຕົ້ນມາ. ພ້ອມດຽວກັນນັ້ນ, ກໍ່ໄດ້ສະແດງຄວາມເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາອັນເຂັ້ມແຂງຂອງ ຄະນະກຳມະການສູນກາງພັກກອມມູນິດຈີນ ທີ່ມີ ສະຫາຍ ສີຈິ້ນຜິງ ເປັນແກນນຳ, ປະຊາຊົນຈີນ ຈະສາມາດສ້າງປະເທດສັງຄົມນິຍົມທັນສະໄໝໃຫ້ສຳເລັດຕາມເວລາຢ່າງແນ່ນອນ ແລະ ບັນລຸເປົ້າໝາຍສູ້ຊົນ 100 ປີເທື່ອການທີສອງຢ່າງສຳເລັດຜົນ.

ສະຫາຍ ນາງ ຟາງຫົງ ໄດ້ສະແດງຄວາມຂອບໃຈ ຕໍ່ ສະຫາຍ ບຸນເຫຼືອ ພັນດານຸວົງ ທີ່ໄດ້ໃຫ້ກຽດມາມອບສານອວຍພອນ ແລະ ຕີລາຄາສູງການຢ້ຽມຢາມທາງລັດຖະກິດຂອງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດລາວ ໃນຕົ້ນເດືອນມິຖຸນາ 2026 ຜ່ານມາ, ໂດຍສະເພາະການອອກຖະແຫຼງການຮ່ວມ ໃນການຈັດຕັ້ງປະຕິບັດແຜນແມ່ບົດ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ທີ່ເຂັ້ມແຂງໜຽວແໜ້ນໃນທຸກສະພາບການຂອງຍຸກໃໝ່ ທີ່ເປັນການຍົກລະດັບການຮ່ວມມືສອງຝ່າຍ; ພ້ອມທັງສະແດງຄວາມຂອບໃຈຕໍ່ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ທີ່ໄດ້ມີການປະສານສົມທົບ ແລະ ຮ່ວມໄມ້ຮ່ວມມືເປັນຢ່າງດີກັບ ສະຖານທູດຈີນ.

## 3. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ພົບປະກັບ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດກູບາ



ໃນວັນທີ 7 ກໍລະກົດ 2026, ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ໄດ້ພົບປະຜ່ານຮູບແບບວິດີໂອທາງໄກ ກັບ ສະຫາຍ ເອມີລີໂອ ຣັດມີຣ ໂລຊາດາ ກາຣເຊຍ (Emilio Ratmir Lozada Garcia), ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດກູບາ.

ໃນໂອກາດດັ່ງກ່າວ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ມີໂອກາດພົບປະຜ່ານວິດີໂອທາງໄກ ກັບ ສະຫາຍ ເອມີລີໂອ ຣັດມີຣ ໂລຊາດາ ກາຣເຊຍ. ຝ່າຍລາວ ໄດ້ແຈ້ງສະພາບການທີ່ພົ້ນເດັ່ນຢູ່ ສປປ ລາວ ໃນໄລຍະຜ່ານມາ, ໂດຍສະເພາະ ຜົນສຳເລັດການຈັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ; ຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດອັນໃຫຍ່ຫຼວງທີ່ປະຊາຊົນກູບາອ້າຍນ້ອງ ພາຍໃຕ້ການນຳພາອັນເດັດດ່ຽວໜຽວແໜ້ນຂອງ ພັກກອມມູນິດກູບາ ຍາດມາໄດ້ຕະຫຼອດໄລຍະ 60 ກວ່າປີຜ່ານມາ, ໂດຍສະເພາະແມ່ນຜົນສຳເລັດທີ່ມີຄວາມໝາຍຄວາມສຳຄັນໃນການພັດທະນາເສດຖະກິດ-ສັງຄົມ ແລະ ປົກປັກຮັກສາໝາກຜົນຂອງການປະຕິວັດ ໃນທ່າມກາງການຖືກປິດລ້ອມທາງດ້ານເສດຖະກິດ, ການຄ້າ ແລະ ການເງິນ ເປັນເວລາກວ່າຫົກທົດສະວັດ.

ສະຫາຍ ເອມີລີໂອ ຣັດມີຣ ໂລຊາດາ ກາຣເຊຍ ໄດ້ແຈ້ງໃຫ້ຊາບກ່ຽວກັບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກກອມມູນິດກູບາ ແລະ ການກະກຽມຈັດກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກກອມມູນິດກູບາ ກໍ່ຄືການພັດທະນາເສດຖະກິດ-ສັງຄົມ ຂອງ ສ.ກູບາ. ພ້ອມນັ້ນ, ຍັງໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາຜົນສຳເລັດການຈັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ແລະ ຜົນສຳເລັດ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ພາຍໃຕ້ການນຳພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສຂອງ ພັກປະຊາຊົນປະຕິວັດລາວ, ອັນໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນລາວ ໄດ້ຮັບການປັບປຸງໃຫ້ດີຂຶ້ນເທື່ອລະກ້າວ; ບົດບາດ ແລະ ອິດທິພົນ ຂອງ ພັກ ແລະ ລັດຖະບານ ສປປ ລາວ ນັບມື້ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ; ພ້ອມທັງສະແດງຄວາມຂອບໃຈມາຍັງ ພັກ, ລັດຖະບານ ແລະ ປະຊາຊົນລາວອ້າຍນ້ອງ ທີ່ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນການປະຕິວັດກູບາ ຕະຫຼອດໄລຍະຜ່ານມາ.

**4. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມອຳລາຂອງ ເອກອັກຄະລັດຖະທູດ ມາເລເຊຍ**



ໃນວັນທີ 08 ກໍລະກົດ 2026, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມອຳລາ ຂອງ ທ່ານ ອິດີ ເອີວານ ບິນ ມາມຸດ, ເອກອັກຄະລັດຖະທູດ ແຫ່ງ ມາເລເຊຍ ປະຈຳ ສປປ ລາວ ໃນໂອກາດສຳເລັດການປະຕິບັດໜ້າທີ່ການທູດຢູ່ ສປປ ລາວ.

ໃນໂອກາດດັ່ງກ່າວ, ທ່ານ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຊົມເຊີຍ ຕໍ່ ທ່ານເອກອັກຄະລັດຖະທູດ ທີ່ໄດ້ສຳເລັດການປະຕິບັດໜ້າທີ່ການທູດ ຢູ່ ສປປ ລາວ ຢ່າງຈົບງາມ, ເຊິ່ງຕະຫຼອດໄລຍະທີ່ຜ່ານມາ ທ່ານທູດໄດ້ເຄື່ອນໄຫວຢ່າງຫ້າວຫັນອັນໄດ້ປະກອບສ່ວນທີ່ສຳຄັນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ລາວ-ມາເລເຊຍ, ທັງໄດ້ຊຸກຍູ້ສົ່ງເສີມການພົວພັນຮ່ວມມື ລະຫວ່າງ 2 ປະເທດ ໃນຂົງເຂດຕ່າງໆ ເປັນຕົ້ນ ດ້ານການສຶກສາ, ການຄ້າ-ການລົງທຶນ, ການທ່ອງທ່ຽວ ແລະ ອື່ນໆ, ພ້ອມທັງເຊື່ອໝັ້ນວ່າ ພາຍຫຼັງສຳເລັດໜ້າທີ່ກັບຄືນປະເທດແລ້ວ, ທ່ານທູດ ຍັງຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ຊຸກຍູ້ການພົວພັນຮ່ວມມື ລາວ-ມາເລເຊຍ ໃນຕໍ່ໜ້າ ພ້ອມນັ້ນ, ທ່ານ ບຸນເຫຼືອ ພັນດານຸວົງ ຍັງໄດ້ຢືນຢັນຄືນຄວາມໝາຍໝັ້ນໃນການຊຸກຍູ້ສົ່ງເສີມການພົວພັນຮ່ວມມືດ້ານພັກ ລະຫວ່າງ ພັກ ປປ ລາວ ກັບ ບັນດາພັກການເມືອງໃນ ມາເລເຊຍ ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍການພົວພັນຮ່ວມມື ລະຫວ່າງ 2 ປະເທດໃຫ້ຂະຫຍາຍຕົວຍິ່ງໆຂຶ້ນ.

ທ່ານເອກອັກຄະລັດຖະທູດ ໄດ້ສະແດງຄວາມຂອບໃຈເປັນຢ່າງສູງ ທີ່ໄດ້ມີໂອກາດເຂົ້າຢ້ຽມຂໍ່ານັບອຳລາ ທ່ານຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ, ຕີລາຄາສູງ ຕໍ່ການພົວພັນຮ່ວມມື ລະຫວ່າງ 2 ປະເທດ ມາເລເຊຍ-ລາວ ໃນໄລຍະຜ່ານມາ ກໍຄືປະຈຸບັນ, ສະແດງຄວາມຂອບໃຈ ຕໍ່ ພັກ, ລັດຖະບານ ສປປ ລາວ ກໍ່ຄືຄະນະພົວພັນຕ່າງປະເທດສູນ

ກາງພັກ ທີ່ຍາມໃດກໍ່ໃຫ້ການສະໜັບສະໜູນຊ່ວຍເຫຼືອສະຖານທູດ ມາໂດຍຕະຫຼອດເຮັດໃຫ້ສະຖານທູດສໍາເລັດໜ້າທີ່ອັນສໍາຄັນທຸກຢ່າງທີ່ປະເທດຊາດມອບໝາຍໃຫ້; ພ້ອມທັງຢືນຢັນວ່າ, ພາຍຫຼັງກັບຄືນປະເທດແລ້ວ ບໍ່ວ່າຢູ່ໃນຖານະໃດກໍ່ຕາມ ຕົນເອງຈະສືບຕໍ່ປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີ ລະຫວ່າງ ມາເລເຊຍ-ສປປ ລາວ ໃຫ້ນັບມື້ແຕກດອກອອກຜົນຍິ່ງໆຂຶ້ນ ໂດຍການຊຸກຍູ້ພາກສ່ວນກ່ຽວຂ້ອງຂອງ ມາເລເຊຍ ໃນການເພີ່ມທະວີການພົວພັນຮ່ວມມື ກັບ ສປປ ລາວ ໃຫ້ຫຼາຍຂຶ້ນ.

**5. ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມອໍາລາ ຂອງ ເອກອັກຄະລັດຖະທູດ ສ. ເກົາຫຼີ**



ວັນທີ 2 ກໍລະກົດ 2026, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ບຸນເຫຼືອ ພັນດານຸວົງ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມອໍາລາ ຂອງ ທ່ານ ຈອງ ຢອງ ຊູ, ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ສ. ເກົາຫຼີ ປະຈໍາ ສປປ ລາວ ໃນໂອກາດທີ່ສໍາເລັດການປະຕິບັດໜ້າທີ່ການທູດ ຢູ່ ສປປ ລາວ.

ໃນໂອກາດດັ່ງກ່າວ, ທ່ານ ຫົວໜ້າ ຄຕພ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ຜົນສໍາເລັດໃນການປະຕິບັດໜ້າທີ່ການທູດ ຢູ່ ສປປ ລາວ ຂອງ ທ່ານ ເອກອັກຄະລັດຖະທູດ ໃນຕະຫຼອດໄລຍະຜ່ານມາ, ໂດຍໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຊຸກຍູ້ ແລະ ສົ່ງເສີມການຮ່ວມມື ລະຫວ່າງ ສອງປະເທດ ລາວ-ສ. ເກົາຫຼີ ໃນຫຼາຍດ້ານເປັນຕົ້ນແມ່ນ ຂະແໜງສາທາລະນະສຸກ, ການຄ້າ-ການລົງທຶນ, ກະສິກໍາ, ການພັດທະນາພື້ນຖານໂຄງລ່າງ, ການພັດທະນາຊົນນະບົດ ແລະ ຊັບພະຍາກອນມະນຸດ ໂດຍສະເພາະ ແມ່ນການໃຫ້ທຶນການສຶກສາສໍາລັບນັກສຶກສາ ແລະ ພະນັກງານ-ລັດຖະກອນລາວ ໄປສຶກສາຮໍ່າຮຽນຢູ່ ສ.ເກົາຫຼີ, ລວມທັງ ການຊ່ວຍເຫລືອເພື່ອການພັດທະນາ (ODA) ແລະ ອື່ນໆ ໂດຍຜ່ານກົນໄກການຮ່ວມມື ລະຫວ່າງ ສອງລັດຖະບານ, ອົງການຈັດຕັ້ງສາກົນ ແລະ ການທູດປະຊາຊົນ ໂດຍສະເພາະການຮ່ວມມື ລະຫວ່າງ ສະມາຄົມມິດຕະພາບລາວ-ເກົາຫຼີ ແລະ ສະມາຄົມມິດຕະພາບເກົາຫຼີ-ລາວ ໃນໄລຍະຜ່ານມາ, ເຊິ່ງເປັນການປະກອບສ່ວນອັນສໍາຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ.

ທ່ານ Jung Yung-soo ໄດ້ສະແດງຄວາມຂອບໃຈຕໍ່ ທ່ານ ບຸນເຫຼືອ ພັນດານຸວົງ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ຂອບໃຈ ຕໍ່ພັກ ແລະ ລັດຖະບານລາວ ທີ່ໄດ້ເອົາໃຈໃສ່ໃຫ້ການຮ່ວມມື ແລະ ຊ່ວຍເຫຼືອ ໃນໄລຍະການປະຕິບັດໜ້າທີ່ການທູດຂອງຕົນຢູ່ ສປປ ລາວ ນັບແຕ່ປີ 2022 ເປັນຕົ້ນມາ ຈົນສໍາເລັດໜ້າທີ່ຢ່າງຈົບງາມ ແລະ ຫວັງວ່າ ພັກ-ລັດຖະບານ ສປປ ລາວ ຈະສືບຕໍ່ໃຫ້ການຮ່ວມມືກັບ ທ່ານ ເອກອັກຄະລັດຖະທູດ ສ. ເກົາຫຼີ ຄົນໃໝ່ ທີ່ຈະມາຮັບໜ້າທີ່ຕໍ່ຈາກຕົນ ເພື່ອພ້ອມກັນຊຸກຍູ້, ສົ່ງເສີມການພົວພັນ ແລະ ການຮ່ວມມື ລະຫວ່າງ ສອງປະເທດ ໃຫ້ສືບຕໍ່ໄດ້ຮັບການຂະຫຍາຍຕົວຍິ່ງໆຂຶ້ນໃນຕໍ່ໜ້າ.

ນອກຈາກນີ້, ສອງຝ່າຍ ຍັງໄດ້ເຫັນດີເປັນເອກະພາບກັນ ໃນການຊຸກຍູ້ການຮ່ວມມືດ້ານພັກ ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ບັນດາພັກການເມືອງໃນ ສ. ເກົາຫຼີ ໃນຕໍ່ໜ້າ ເພື່ອເປັນການເສີມຂະຫຍາຍການພົວພັນ ແລະ ການຮ່ວມມືສອງຝ່າຍໃຫ້ກ້ວາງຂຶ້ນ ເພື່ອນໍາເອົາຜົນປະໂຫຍດສູງສຸດມາສູ່ປະຊາຊົນສອງປະເທດ ສປປ ລາວ-ສ. ເກົາຫຼີ.

## III. ການເຄື່ອນໄຫວຂອງ ອົງການຈັດຕັ້ງມະຫາຊົນ ພາຍໃນ ຄຕພ

### 1. ຄະນະພົວພັນຕ່າງປະເທດສູນກາງພັກ ເຜີຍແຜ່ມະຕິກອງປະຊຸມຜູ້ແທນກຳມະບານທົ່ວປະເທດ ຄັ້ງທີ IX




ວັນທີ 15 ກໍລະກົດ 2026, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມເຜີຍແຜ່ມະຕິກອງປະຊຸມໃຫຍ່ ຜູ້ແທນກຳມະບານລາວທົ່ວປະເທດ ຄັ້ງທີ IX, ໃຫ້ກຽດເຜີຍແຜ່ໂດຍ ສະຫາຍ ວິໄລ ວົງຂະເສີມ, ຮອງເລຂາຄະນະພັກ, ຮອງປະທານຄະນະບໍລິຫານງານສູນກາງສະຫະພັນ ກຳມະບານລາວ, ພ້ອມດ້ວຍບັນດາສະມາຊິກພາຍໃນ ຄຕພ ເຂົ້າຮ່ວມຢ່າງທົ່ວໜ້າ.

ໃນກອງປະຊຸມເຜີຍແຜ່ ມະຕິກອງປະຊຸມໃຫຍ່ຜູ້ແທນກຳມະບານລາວ ທົ່ວປະເທດ ຄັ້ງທີ IX, ເພື່ອເປັນການເຜີຍແຜ່ ແລະ ເຊື່ອມຊຶມໃຫ້ແກ່ພະນັກງານ, ສະມາຊິກກຳມະບານພາຍໃນ ຄຕພ ກໍ່ຄື ບັນດາຮາກຖານຂອງແຕ່ລະກົມໄດ້ຮັບຮູ້, ກຳແໜ້ນຢ່າງລະອຽດ, ກວ້າງຂວາງ, ເລິກເຊິ່ງ ແລະ ນຳໄປຈັດຕັ້ງປະຕິບັດ, ຜັນຂະຫຍາຍຢ່າງຖືກຕ້ອງ ແລະ ມີປະສິດທິຜົນສູງ; ສະຫາຍ ວິໄລ ວົງຂະເສີມ ໄດ້ຍົກໃຫ້ເຫັນເຖິງບັນດາເອກະສານທີ່ສຳຄັນ ທີ່ກອງປະຊຸມໃຫຍ່ຜູ້ແທນກຳມະບານລາວ ທົ່ວປະເທດ ທີ່ໄດ້ຮັບຮອງເອົາຄື: ຜົນສຳເລັດກອງປະຊຸມໃຫຍ່ ຜູ້ແທນກຳມະບານລາວ ທົ່ວປະເທດ ສະໄໝທີ IX; ແຜນພັດທະນາວຽກງານ ກຳມະບານລາວ 5 ປີ ຄັ້ງທີ V (2026-2030); ກົດລະບຽບສະຫະພັນກຳມະບານລາວ ສະໄໝທີ IX ແລະ ແຜນດຳເນີນງານຂອງ ຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ສະໄໝທີ IX ໄລຍະ 5 ປີ (2026-2030).

### 2. ອົງການຈັດຕັ້ງມະຫາຊົນ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຢ້ຽມຊົມອະນຸສອນສະຖານ ປະທານ ສຸພານຸວົງ ເນື່ອງໃນໂອກາດວັນຄ້າຍວັນເກີດ ຄົບຮອບ 117 ປີ (13/07/1909-13/07/2026)



ໃນຕອນບ່າຍຂອງວັນທີ 9 ກໍລະກົດ 2026, ສະມາຊິກ 3 ອົງການຈັດຕັ້ງມະຫາຊົນ ຄະນະພົວພັນຕ່າງປະເທດສູນກາງພັກ ຈຳນວນ 30 ສະຫາຍ ນຳໂດຍ ສະຫາຍ ວົງຄຳ ແສນສະທິດ, ກຳມະການຄະນະພັກ, ຫົວໜ້າກົມເອີຣົບ-ອາເມຣິກາ, ເລຂາຄະນະບໍລິຫານງານຊາວໜຸ່ມ ຄຕພ ພ້ອມດ້ວຍບັນດາສະຫາຍຄະນະບໍລິຫານງານ, ຄະນະໜ່ວຍ ແລະ ສະມາຊິກ ຂອງສາມອົງການຈັດຕັ້ງມະຫາຊົນ ໄດ້ເຂົ້າຢ້ຽມຊົມອະນຸສອນສະຖານ ປະທານ ສຸພານຸວົງ.

ການຢ້ຽມຊົມຄັ້ງນີ້ ແມ່ນເພື່ອຫວນຄືນເຖິງຊີວິດ, ພາລະກິດປະຕິວັດ ແລະ ຄຸນງາມຄວາມດີອັນໃຫຍ່ຫຼວງຂອງ ປະທານ ສຸພານຸວົງ ຜູ້ນຳທີ່ແສນເຄົາລົບຮັກຂອງປວງຊົນລາວທັງຊາດ, ຜູ້ທີ່ໄດ້ອຸທິດທັງຊີວິດເພື່ອພາລະກິດການສູ້ປົດປ່ອຍຊາດ, ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນຮຸ່ງເຮືອງສືບທອດເຖິງປັດຈຸບັນ. ໃນການຢ້ຽມຊົມຄັ້ງນີ້, ຄະນະໄດ້ຮັບຟັງການບັນຍາຍກ່ຽວກັບປະຫວັດ, ຊີວິດ, ການເຄື່ອນໄຫວປະຕິວັດ, ຜົນງານອັນໂດດເດັ່ນ ແລະ ບົດຮຽນອັນມີຄຸນຄ່າຂອງ ປະທານ ສຸພານຸວົງ ພ້ອມທັງໄດ້ຢ້ຽມຊົມຮູບພາບ, ເອກະສານ, ວັດຖຸພັນ ແລະ ຂໍ້ມູນສຳຄັນຕ່າງໆ ທີ່ສະທ້ອນໃຫ້ເຫັນເຖິງຄຸນສົມບັດສິນທຳປະຕິວັດ, ແບບແຜນການດຳລົງຊີວິດ, ນ້ຳໃຈຮັກຊາດ, ຄວາມເສຍສະຫຼະ, ຄວາມກ້າຫານ ໃນຕໍ່ພາລະກິດຂອງພັກ, ຂອງຊາດ ແລະ ຂອງປະຊາຊົນ. ກິດຈະກຳດັ່ງກ່າວ ຖືເປັນການສຶກສາອົບຮົມດ້ານການເມືອງ-ແນວຄິດ ແລະ ປູກຝັງຈິດສຳນຶກຮັກຊາດໃຫ້ແກ່ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຄົ້ນຄວ້າເຊື່ອມຊຶມຮ່ຳຮຽນເອົາແບບຢ່າງຄຸນສົມບັດສິນທຳປະຕິວັດຂອງ ປະທານ ສຸພານຸວົງ ເພື່ອນຳໃຊ້ເຂົ້າໃນການປະຕິບັດວຽກງານ ແລະ ດຳລົງຊີວິດຕົວຈິງ.